ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 106 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 22.03.2017

# ດຳລັດ

## ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະກຳມະການພົວພັນຄົນເຊື້ອຊາດລາວຢູ່ຕ່າງປະເທດ

- ອີງຕາມກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ (ສະບັບປັບປຸງ) ເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມມະຕິ ຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ 73/ຄລສພ/07, ລົງວັນທີ 13 ກັນຍາ 2007 ວ່າດ້ວຍວຽກງານພົວພັນຄົນເຊື້ອຊາດລາວຢູ່ຕ່າງປະເທດ;
- ອີງຕາມໜັງສືສະເໜີ ຂອງກະຊວງການຕ່າງປະເທດ ສະບັບເລກທີ 008415/ຕປທ.ພລຕ.3, ລົງວັນທີ 11 ພະຈິກ 2016;
- ອີງຕາມໜັງສືສະເໜີ ຂອງກະຊວງພາຍໃນ ສະບັບເລກທີ 40 /ພນ, ລົງວັນທີ 17 ກຸມພາ 2017;

## ນາຍົກລັດຖະມົນຕີ ອອກດຳລັດ

## ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ຂອງຄະນະກຳມະການພົວພັນຄົນເຊື້ອຊາດລາວຢູ່ຕ່າງປະເທດ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ຂອງທຸກພາກສ່ວນ ແລະ ຂະແໜງການ ເປັນເອກະພາບໃນການເຄື່ອນໄຫວຍາດແຍ່ງຄົນເຊື້ອຊາດລາວຢູ່ຕ່າງປະເທດ ແນໃສ່ໃຫ້ເຂົາເຈົ້າຫັນມາປະກອບສ່ວນໃນການສ້າງສາພັດທະນາປະເທດຊາດ ຕາມແນວທາງນະໂຍບາຍຂອງພັກ ແລະ ລັດ.

**ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ**

ຄະນະກໍາມະການພົວພັນຄົນເຊື້ອຊາດລາວຢູ່ຕ່າງປະເທດ ຂຽນເປັນຕົວອັກສອນຫຍໍ້ວ່າ "ຄພລຕ"ເປັນອົງການຈັດຕັ້ງໜຶ່ງຂອງລັດຖະບານ ທີ່ຂຶ້ນກັບກະຊວງການຕ່າງປະເທດ ໂດຍມອບໃຫ້ລັດຖະມົນຕີກະຊວງການຕ່າງປະເທດ ເປັນຜູ້ຊີ້ນໍາ, ມີພາລະບົດບາດເປັນເສນາທິການໃຫ້ລັດຖະບານ ຄົ້ນຄວ້າກ່ຽວກັບ ບັນດານະໂຍບາຍ, ຮູບການ ແລະ ການເຄື່ອນໄຫວ ທີ່ມີຕໍ່ຄົນເຊື້ອຊາດລາວຢູ່ຕ່າງປະເທດ ຕາມມະຕິ ຂອງຄະນະເລຂາທິການສູນກາງພັກວາງອອກ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ**

ໜ້າທີ່ ຂອງຄະນະກໍາມະການພົວພັນຄົນເຊື້ອຊາດລາວຢູ່ຕ່າງປະເທດ ມີດັ່ງນີ້:

1. ເປັນເສນາທິການໃນການຄົ້ນຄວ້າ ກ່ຽວກັບແນວທາງນະໂຍບາຍ ແລະ ລະບຽບກົດໝາຍ ທີ່ມີຕໍ່ຄົນເຊື້ອຊາດລາວຢູ່ຕ່າງປະເທດ ເພື່ອຂໍຄໍາເຫັນດີຈາກຂັ້ນເທິງ;
2. ວາງແຜນການ, ແຜນງານ, ອໍານວຍຄວາມສະດວກ, ຂົນຂວາຍ ແລະ ຍາດແຍ່ງຄົນເຊື້ອຊາດລາວຢູ່ຕ່າງປະເທດ ເພື່ອໃຫ້ມາສະໜັບສະໜູນແນວທາງນະໂຍບາຍ ຂອງພັກ-ລັດເຮົາ ຕິດພັນກັບບ້ານເກີດເມືອງນອນ, ມາຮ່ວມສ້າງສາພັດທະນາປະເທດຊາດ ຕາມຄວາມສາມາດ ແລະ ຄວາມສະໝັກໃຈຂອງເຂົາເຈົ້າ;
3. ສ້າງກົນໄກອໍານວຍຄວາມສະດວກ ແລະ ແນໃສ່ການສົ່ງເສີມການໄປມາຫາສູ່ກັນ ລະຫວ່າງ ປະຊາຊົນລາວ ແລະ ຄົນເຊື້ອຊາດລາວຢູ່ຕ່າງປະເທດ ໃຫ້ນັບມື້ນັບດີຂຶ້ນ;
4. ຕິດຕາມ ແລະ ຊອກຮູ້ສະພາບການເຄື່ອນໄຫວຂອງຄົນເຊື້ອຊາດລາວຢູ່ຕ່າງປະເທດ ເພື່ອພົວພັນເຊິ່ງກັນ ແລະ ກັນ, ສະກັດກັ້ນການເຄື່ອນໄຫວຂອງກຸ່ມຄົນບໍ່ຫວັງດີ ທີ່ມີເຈດຕະນາທໍາລາຍມ້າງເພລະບອບໃໝ່ ແລະ ປະເທດຊາດ;
5. ຈັດແຕ່ງແບ່ງງານ ແລະ ມອບວຽກປະເມີນຜົນແຕ່ລະວຽກ ໃນແຕ່ລະໄລຍະ ໃຫ້ພາກສ່ວນກ່ຽວຂ້ອງ ທັງລະດັບສູນກາງ ແລະ ທ້ອງຖິ່ນ, ສະຫຼຸບລາຍງານໃຫ້ຂັ້ນເທິງ ເປັນປົກະຕິ;
6. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 4 ຂອບເຂດສິດ**

ຄະນະກໍາມະການພົວພັນຄົນເຊື້ອຊາດລາວຢູ່ຕ່າງປະເທດ ມີສິດດັ່ງນີ້:

1. ພົວພັນ ແລະ ແລກປ່ຽນຖອດຖອນບົດຮຽນນໍາປະເທດເພື່ອນມິດ ກ່ຽວກັບວຽກງານພົວພັນຄົນເຊື້ອຊາດລາວຢູ່ຕ່າງປະເທດ. ພ້ອມດຽວກັນນັ້ນ, ກໍ່ມີສິດເຂົ້າຮ່ວມປະຊຸມທີ່ການຈັດຕັ້ງສາກົນ ກໍ່ຄືການຈັດຕັ້ງຂອງຄົນເຊື້ອຊາດລາວຢູ່ຕ່າງປະເທດຈັດຂຶ້ນ ຕາມການເຊື້ອເຊີນ ແລະ ຕາມຄວາມເໝາະ ສົມ;
2. ຄົ້ນຄວ້າ ແລະ ນໍາສະເໜີຕໍ່ລັດຖະບານ ກ່ຽວກັບແຜນການ ແລະ ການຈັດຕັ້ງປະຕິບັດວຽກງານຕ່າງໆ ທີ່ພົວພັນເຖິງການຕອບໂຕ້ ແລະ ການເຄື່ອນໄຫວຕ້ານ ສປປ ລາວ ຂອງກຸ່ມຄົນທີ່ບໍ່ຫວັງດີຢູ່ຕ່າງປະເທດ;
3. ມອບໝາຍວຽກ ແລະ ປະສານງານກັບກະຊວງ, ອົງການລັດທຽບເທົ່າ ແລະ ສໍານັກງານຕາງໜ້າການທູດລາວຢູ່ຕ່າງປະເທດ ກໍ່ຄືສະຖານທູດຕ່າງປະເທດ ຢູ່ ສປປ ລາວ ກ່ຽວກັບວຽກງານພົວພັນຄົນເຊື້ອຊາດລາວຢູ່ຕ່າງປະເທດ;